ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 319 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2020

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດອັດຕາດອກເບ້ຍ
# ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ
# ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມຄຸ້ມຄອງສະຖາບັນການເງິນ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການໃຫ້ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ກຳນົດອັດຕາດອກເບ້ຍຂອງຕົນ ບົນພື້ນຖານການໄລ່ລຽງຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ.

### ມາດຕາ 2 ການກຳນົດອັດຕາດອກເບ້ຍ

ການກຳນົດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃຫ້ປະຕິບັດ ດັ່ງນີ້:

1. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ກຳນົດອັດຕາດອກເບ້ຍເງິນຝາກໃຫ້ແທດເໝາະກັບສະພາບເສດຖະກິດ ແລະ ຫຼັກການບໍລິຫານຕົ້ນທຶນໃນການດຳເນີນທຸລະກິດຂອງຕົນ;

2. ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກສາມາດກຳນົດອັດຕາດອກເບ້ຍເງິນກູ້ ບໍ່ເກີນສີ່ເທົ່າ ຂອງອັດຕາດອກເບ້ຍເງິນກູ້ ສະເລ່ຍໜຶ່ງປີຂອງທະນາຄານທຸລະກິດທີ່ວລະບົບ.

ກົມຄຸ້ມຄອງສະຖາບັນການເງິນ ຕ້ອງແຈ້ງກ່ຽວກັບອັດຕາດອກເບ້ຍເງິນກູ້ ສະເລ່ຍໜຶ່ງປີ ຂອງທະນາຄານທຸລະກິດທີ່ວລະບົບ ໃຫ້ແກ່ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃນທຸກໆ ຫົກເດືອນ ເພື່ອເປັນພື້ນຖານໃນການກຳນົດອັດຕາດອກເບ້ຍຂອງຕົນ.

**ມາດຕາ 3 ການປະກາດອັດຕາດອກເບ້ຍ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງແຈ້ງປະກາດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ຢ່າງລະອຽດໃຫ້ລູກຄ້າຂອງຕົນຮັບຊາບ ຢູ່ປ່ອງບໍລິການ, ກະດານຂ່າວ ແລະ ຊ່ອງທາງອື່ນທີ່ເໝາະສົມ.

**ມາດຕາ 4 ການລາຍງານ**

ການລາຍງານອັດຕາດອກເບ້ຍເງິນຝາກ, ເງິນກູ້ຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃຫ້ປະຕິບັດຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 5 ຂໍ້ຫ້າມ**

ຫ້າມສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມີພຶດຕິກຳ ດັ່ງນີ້:

1. ກຳນົດອັດຕາດອກເບ້ຍເງິນຝາກ ແບບບິດເບືອນອັດຕາດອກເບ້ຍທີ່ແທ້ຈິງ;
2. ກຳນົດອັດຕາດອກເບ້ຍເງິນກູ້ເກີນກອບທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 6 ການລະເມີດ**

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ຕາມກໍລະນີເບົາ ຫຼື ໜັກ.

ມາດຕາ 7 ການຈັດຕັ້ງປະຕິບັດ

ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ ແລະ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ເປັນເຈົ້າການໃນການຄຸ້ມຄອງ ແລະ ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມີໜ້າທີ່ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 8 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກໍານົດ ຫຼື ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ